ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0846 /ກງ

ນະຄອນຫລວງວຽງຈັນ, ວັນທີ 23 ມີນາ 2020

# ແຈ້ງການ

ຮຽນ : ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າອ້ອມຂ້າງສູນກາງ;

- ບັນດາທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ເລື່ອງ : ການມອບຄືນຍອດເຫຼືອທີ່ບໍ່ໄດ້ຈ່າຍ ຫຼື ຈ່າຍບໍ່ໝົດ ເຂົ້າງົບປະມານແຫ່ງລັດປະຈຳປີ.

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 30/ສພຊ, ລົງວັນ 02 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານບໍລິຫານຂອງລັດ ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018;
- ອີງຕາມ ການສະເໜີຂອງກົມງົບປະມານແຫ່ງລັດສະບັບເລກທີ 0148/ກງລ, ລົງວັນທີ 28 ກຸມພາ 2020.

ເພື່ອຜັນຂະຫຍາຍກົດໝາຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ແລະ ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການປະຢັດງົບປະມານຂອງລັດ ສະບັບເລກທີ 09/ນຍ, ລົງວັນທີ 19 ພຶດສະພາ 2017, ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດດັ່ງນີ້:

1. ຫົວໜ່ວຍງົບປະມານຂັ້ນຕ່າງໆ ທີ່ຖອນລາຍຈ່າຍງົບປະມານຜ່ານລະບົບທະນາຄານ ຫຼື ຜ່ານຄັງເງິນແຫ່ງຊາດ ຕາມແຜນງົບປະມານທີ່ໄດ້ອະນຸມັດ ເພື່ອໄປເຄື່ອນໄຫວວຽກງານ ຢູ່ພາຍໃນ-ຕ່າງປະເທດ ແລະ ລາຍຈ່າຍອື່ນໆ ເຊັ່ນ:
   - ລາຍຈ່າຍເງິນເດືອນ-ເງິນອຸດໜູນ, ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ ຂອງລັດຖະກອນທີ່ຖືກວິໄນ, ປະລະໜ້າທີ່, ເສຍຊີວິດ, ຍົກຍ້າຍບ່ອນປະຈຳການ;
   - ລາຍຈ່າຍບໍລິຫານປົກກະຕິ-ດັດສົມ, ສົ່ງເສີມ ແລະ ເງິນບຳລຸງເປັນຕົ້ນ: ໄປວຽກທາງການພາຍໃນ ແລະ ຕ່າງປະເທດ, ຈັດກອງປະຊຸມ-ສຳມະນາ, ຝຶກອົບຮົມ, ຮັບແຂກພາຍໃນ-ຕ່າງປະເທດ ແລະ ເງິນແຮອື່ນໆ;
   - ລາຍຈ່າຍລົງທຶນຂອງລັດ ເປັນຕົ້ນ: ລາຍຈ່າຍຄຸ້ມຄອງໂຄງການ, ການຊື້ເຄື່ອງມື ແລະ ວັດຖຸອຸປະກອນ, ກົນຈັກ, ແນວພັນພືດ, ແນວພັນສັດ ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການ ແລະ ອື່ນໆ.
2. ໃຫ້ສະຫຼຸບການເບີກຈ່າຍຕົວຈິງເງິນບ້ວງດັ່ງກ່າວ ໂດຍມີເອກະສານຢັ້ງຢືນ ຫຼື ໃບບິນການຈ່າຍເງິນອອກຈາກຄັງຂອງຕົນເປັນແຕ່ລະໄລຍະ; ຖ້າຫາກມີຍອດເຫຼືອບໍ່ໄດ້ຈ່າຍ ຫຼື ຈ່າຍບໍ່ໝົດ ແມ່ນໃຫ້ມອບຄືນເຂົ້າບັນຊີເງິນຝາກງົບປະ

ມານແຫ່ງລັດ ທີ່ເປີດໄວ້ຢູ່ທະນາຄານ ດ້ວຍການນຳໃຊ້ລະບົບອີເລັກໂຕຣນິກຂອງທະນາຄານເຊັ່ນ: ATM, Internet Banking, Mobile Banking, EDC ແລະ ຊ່ອງທາງອື່ນໆ;

3. ໃຫ້ຄັງເງິນແຫ່ງຊາດຕິດຕາມ, ບັນທຶກບັນຊີ ຕາມສາລະບານງົບປະມານ-ບັນຊີອັນດຽວທີ່ເປັນເອກະພາບກັນ (ເນື້ອໃນລາຍຮັບເງິນເຫຼືອສົ່ງຄືນ) ແລະ ສະຫຼຸບລາຍງານປະຈຳເດືອນ, ງວດ ແລະ ປະຈຳປີ;

4. ການມອບເງິນເຂົ້າບັນຊີເງິນຝາກງົບປະມານແຫ່ງລັດ ແມ່ນໃຫ້ຫົວໜ່ວຍງົບປະມານ, ອົງການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນສາມາດມອບໂດຍກົງ ຜ່ານລະບົບທະນາຄານ ຫຼື ຜ່ານລະບົບຄັງເງິນແຫ່ງຊາດ ແລະ ໃຫ້ລະບຸເນື້ອໃນລະອຽດ ວ່າເປັນລາຍຈ່າຍປະເພດໃດເຊັ່ນ: ປະເພດລາຍຈ່າຍຕາມສາລະບານງົບປະມານ-ບັນຊີອັນດຽວທີ່ເປັນເອກະພາບກັນ, ຊື່ຂະແໜງການ ຫຼື ອົງການຈັດຕັ້ງ ແລະ ຊື່ບຸກຄົນ ພ້ອມດ້ວຍເບີໂທລະສັບ.

5. ສຳລັບເລກບັນຊີມອບເງິນເຂົ້າງົບປະມານແຫ່ງລັດ ທີ່ເປີດໄວ້ຢູ່ບັນດາທະນາຄານທຸລະກິດລັດ, ທະນາຄານທຸລະກິດ ແລະ ທະນາຄານຫຸ້ນສ່ວນ ມີດັ່ງນີ້:

1) ຂັ້ນສູນກາງ: ໃຫ້ມອບເຂົ້າບັນຊີງົບປະມານຢູ່ຄັງເງິນແຫ່ງຊາດ ຫຼື ມອບຜ່ານລະບົບບັນຊີທະນາຄານດັ່ງນີ້:

ກ). ເງິນກີບ

- ທະນາຄານ ການຄ້າຕ່າງປະເທດມະຫາຊົນ ເລກບັນຊີ: **010.11.0000.371463.001;**
- ທະນາຄານ ພັດທະນາລາວ ເລກບັນຊີ: **0302.000.100000013;**
- ທະນາຄານ ສົ່ງເສີມກະສິກຳ ເລກບັນຊີ: **0200.11.0000483;**
- ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ເລກບັນຊີ: **010.00.13.0001043.**

ຂ). ເງິນໂດລາ

- ທະນາຄານ ການຄ້າຕ່າງປະເທດມະຫາຊົນ ເລກບັນຊີ: **010.11.0100.371463.001;**
- ທະນາຄານ ພັດທະນາລາວ ເລກບັນຊີ: **0302.001.1000000007;**
- ທະນາຄານ ສົ່ງເສີມກະສິກຳ ເລກບັນຊີ: **0200.11.0012448;**
- ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ເລກບັນຊີ: **010.01.13.0001019.**

2) ຂັ້ນທ້ອງຖິ່ນ: ສ່ວນບັນດາແຂວງ ແລະ ນະຄອນຫຼວງ ແມ່ນສາມາດມອບເງິນເຂົ້າງົບປະມານ ຢູ່ຄັງເງິນແຫ່ງຊາດປະຈຳແຂວງ ຫຼື ຜ່ານບັນຊີເງິນຝາກງົບປະມານ ຢູ່ທະນາຄານປະຈຳແຕ່ລະແຂວງ ທີ່ຄັງເງິນແຫ່ງຊາດປະຈຳແຂວງເປີດໄວ້ (ລາຍລະອຽດໃຫ້ບັນດາແຂວງ, ນະຄອນຫຼວງ ແຈ້ງໝາຍເລກບັນຊີເງິນຝາກ ທີ່ເປີດໄວ້ຢູ່ທະນາຄານ ເພື່ອສະດວກໃນການມອບເງິນດັ່ງກ່າວເຂົ້າງົບປະມານ).

6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 3395/ກງ, ລົງວັນທີ 19 ສິງຫາ 2019.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ,

ຮອງນາຍົກລັດຖະມົນຕີ
ລັດຖະມົນຕີກະຊວງການເງິນ